ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ຫ້ອງການ

0804

ເລກທີ /ຫອຄ.ກຫຄວ

ນະຄອນຫລວງວຽງຈັນ, ວັນທີ 02 ມິຖຸນາ 2020

**ແຈ້ງການ**

ເຖິງ: ເຈົ້າໜ້າທີ່ທະບຽນວິສາຫະກິດ,ພະແນກອຸດສາຫະກໍາ ແລະ ການຄ້າແຂວງ,ນະຄອນຫລວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ຂັ້ນເມືອງ.

ເລື່ອງ: ການປ່ຽນແປງເນື້ອໃນທະບຽນວິສາຫະກິດ;

- ອີງຕາມຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດສະບັບເລກທີ 0023/ອຄ, ລົງວັນທີ 09 ມັງກອນ 2019;
- ອີງຕາມສະພາບການຈັດຕັ້ງປະຕິບັດຂອງທ້ອງຖິ່ນໃນຊ່ວງໄລຍະເວລາຜ່ານມາ;

ເພື່ອເຮັດໃຫ້ການຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 0023/ອຄ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ,ຫ້ອງການກະຊວງອຸດສາຫະກໍາ ແລະ ການຄ້າແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ກ່ຽວກັບການປ່ຽນແປງເນື້ອໃນທະບຽນວິສາຫະກິດດັ່ງລຸ່ມນີ້:

1. ໃບທະບຽນວິສາຫະກິດອອກຢູ່ບ່ອນໃດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນນັ້ນສືບຕໍ່ປ່ຽນແປງເນື້ອໃນໃຫ້ເລີຍ ເຖິງແມ່ນຈະເປັນການເພີ່ມທຶນ, ຫລຸດທຶນຈົດທະບຽນ ທີ່ເກີນ ຫລື ຫລຸດຂອບເຂດຄວາມຮັບຜິດຊອບຂອງຕົນກໍ່ຕາມ, ຫ້າມບໍ່ໃຫ້ຍ້າຍຖານຂໍ້ມູນໄປມາຫລື ແຈ້ງໃຫ້ຜູ້ລົງທຶນມາຂຶ້ນທະບຽນໃໝ່ຕາມການແບ່ງຂັ້ນຄຸ້ມຄອງຕາມທີ່ລະບຸໄວ້ໃນ ມາດຕາ 09 ຂອງຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດສະບັບເລກທີ 0023/ອຄ,ເພາະຈະເປັນການສ້າງຄວາມສັບສົນ, ຫຍຸ້ງຍາກໃຫ້ຜູ້ລົງທຶນ ແລະ ເຮັດໃຫ້ຖານຂໍ້ມູນຊໍ້າຊ້ອນໂຕເລກສະຖິຕິ ບໍ່ຊັດເຈນ;

2. ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ກ່ຽວກັບຍ້າຍທີ່ຕັ້ງສໍານັກງານລະຫວ່າງ ເມືອງ ຕໍ່ ເມືອງແຂວງຕໍ່ແຂວງ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກທະບຽນວິສາຫະກິດໃຫ້ເຮັດສະໂນດນໍາສົ່ງຊຸດສໍານວນຄໍາຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ ພ້ອມກັບສໍານວນເອກະສານທັງໝົດ ທີ່ສໍາເນົາຢູ່ຖານຂໍ້ມູນວິສາຫະກິດ ສົ່ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເມືອງໃໝ່ ຫລື ແຂວງໃໝ່ ຕາມສະຖານທີ່ທີ່ຈະຍ້າຍໄປ ເພື່ອປ່ຽນແປງທະບຽນວິສາຫະກິດໃໝ່ໃຫ້ ເວລາເມືອງ ຫລື ແຂວງໃໝ່ ບ່ອນທີ່ຍ້າຍໄປນັ້ນປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້ຜູ້ລົງທຶນແລ້ວ ຕ້ອງແຈ້ງມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເມືອງເກົ່າ ຫລື ແຂວງເກົ່າ ເພື່ອຊາບ ແລະ ລົບຫົວໜ່ວຍວິສາຫະກິດດັ່ງກ່າວ ອອກຈາກຖານຂໍ້ມູນວິສາຫະກິດຂອງຕົນ ເພື່ອຫລີກລ້ຽງຫົວໜ່ວຍສະຖິຕິຊໍ້າຊ້ອນກັນ.

ດັ່ງນັ້ນ , ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ຫ້ອງການ

ນ.ບານສະຕີ ເທບພະວົງ

สแกนด้วย CamScanner